ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 45 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 04 ພະຈິກ 2016

ສໍານັກງານ ຄຄຊ
ເລກທີ 1098
ວັນທີ 10 NOV 2016
ໂທລະສັບ 021 217770

# ລາຍງານການເຄື່ອນໄຫວປະຈໍາອາທິດ ທີ 24-28/10/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

- ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ແຂງຄ່າ 0,64% ທຽບເອີໂຣ ພາຍຫຼັງກະຊວງແຮງງານຂອງສະຫະລັດເປີດເຜີຍຕົວເລກການຂໍສະຫວັດດີການວ່າງງານຫຼຸດລົງ 3.000 ຄົນ ມາເປັນ 258.000 ຄົນໃນອາທິດຜ່ານມາ, ຊຶ່ງອາດຈະສົ່ງຜົນໃຫ້ທະນາຄານກາງສະຫະລັດ (FED) ມີການປັບຂຶ້ນອັດຕາດອກເບ້ຍທ້າຍປີນີ້.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 21/10/2016 | ອາທິດນີ້ 28/10/2016 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0971 | 1,0901 | 0,64% |
| ໂດລາ/ເຢນ | 103,82 | 104,40 | -0,55% |
| ໂດລາ/ບາດ | 35,078 | 35,032 | 0,13% |
| ໂດລາ/ເປໂຊ | 48,20 | 48,35 | -0,31% |
| ໂດລາ/ຣູເປັຍ | 13.027 | 13.023 | 0,03% |
| ໂດລາ/ໂດລາສິງກະໂປ | 1,3894 | 1,3921 | -0,19% |
| ໂດລາ/ຢວນ | 6,7411 | 6,7725 | -0,46% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນຫຼຸດລົງ 1,15% ເປັນ 51,49 ໂດລາ/ບາເຣວ ພາຍຫຼັງປະເທດ ອີຣານ ຢືນຢັນວ່າຈະຂໍຮັບການຍົກເວັ້ນໃຫ້ຍັງສາມາດເພີ່ມກຳລັງການຜະລິດໄດ້ຕາມຄວາມຕ້ອງການ ຈຶ່ງເຮັດໃຫ້ກຸ່ມໂອເປັກ ຍັງບໍ່ສາມາດມີຂໍ້ສະຫຼຸບຢ່າງເປັນທາງການກ່ຽວກັບມາດຕະການປັບຫຼຸດກຳລັງການຜະລິດນ້ຳມັນ. ສ່ວນລາຄາຄຳເພີ່ມຂຶ້ນ 0,33% ເປັນ 1.268 ໂດລາ/ອອນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າ 0,10% ສຳລັບອັດຕາ ທຫລ ອ່ອນຄ່າລົງ 0,32% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,19% ສຳລັບອັດຕາ ທຫລ ແລະ ອ່ອນຄ່າລົງ 0,43% ສຳລັບອັດຕາຕະຫຼາດ. ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,19% ສຳລັບອັດຕາ ທຫລ ແລະ ອ່ອນຄ່າລົງ 3,92% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,98% ສຳລັບອັດຕາ ທຫລ ແລະ ອ່ອນຄ່າລົງ 5,86% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 21/09/2016 | | | ອາທິດນີ້ 28/10/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.118,83 | 8.145,76 | 8.129,63 | 8.129,89 | 8.154,33 | 8.137,64 | -0,14% | -0,11% | -0,10% | -0,44% | 0,23% | 0,19% |
| ບາດ | 232,37 | 233,60 | 233,37 | 232,60 | 232,99 | 232,92 | -0,10% | 0,26% | 0,19% | -0,35% | -1,91% | -1,98% |
| ອັດຕາຕະຫຼາດ | | | | | | | | | | | | |
| ໂດລາ | 8.485,20 | 8.532,00 | 8.508,60 | 8.501,11 | 8.570,00 | 8.535,56 | -0,19% | -0,44% | -0,32% | -4,35% | -3,82% | -3,92% |
| ບາດ | 241,27 | 242,90 | 242,08 | 242,22 | 244,06 | 243,14 | -0,39% | -0,47% | -0,43% | -4,09% | -6,00% | -5,86% |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 2,05% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,73%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,45% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,90%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (24-27/10/2016) ເຫັນວ່າ ທຫລ ຊື້ໂດລາສຸດທິ 29,41 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 46,49 ລ້ານໂດລາ ແລະ ຂາຍໂດລາໄດ້ 17,08 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.195,54 ລ້ານບາດ (ໃນນີ້ ຊື້ບາດໄດ້ 71,77 ລ້ານບາດ ແລະ ຂາຍບາດໄດ້ 1,267.31 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 20,20% ແລະ ຫຼຸດລົງ 19,61% ສຳລັບເງິນບາດ.
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 2,59 ລ້ານໂດລ້ານ ແລະ ເງິນບາດ 54,00 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫລ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 8,90 ລ້ານໂດລາ ແລະ ເງິນບາດ 65,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ພາຍໃນອາທິດແມ່ນບໍ່ມີການເຄື່ອນໄຫວ.

**ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ**

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 17-20/10/2016 | | ອາທິດທີ 24-27/10/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **51,55** | **212,81** | **46,49** | **71,77** | **-9,82%** | **-66,28%** |
| - ທ/ຄທຸລະກິດລັດ | 8,33 | 117,15 | 8,20 | 107,74 | -1,56% | -8,03% |
| - ທ/ຄທຸລະກິດອື່ນໆ | 43,22 | 95,66 | 38,29 | -35,97 | -11,41% | -137,60% |
| 2. ການຂາຍເງິນຕາຕ່າງປະເທດ | **28,11** | **906,72** | **17,08** | **1,267.31** | **-39,24%** | **39,77%** |
| - ທ/ຄທຸລະກິດລັດ | 11,55 | 126,25 | 11,63 | 121,54 | 0,69% | -3,73% |
| - ທ/ຄທຸລະກິດອື່ນໆ | 16,56 | 780,47 | 5,45 | 1,145.77 | -67,09% | 46,81% |
| ຊື້-ຂາຍສຸດທິ ທທກ | **23,44** | **-693,91** | **29,41** | **-1.195,54** | **25,47%** | **72,29%** |
| - ຜິດດ່ຽງ ຊື້-ຂາຍ | 45,47% | -326,07% | 63,26% | -1665,79% | 39,13% | 410,87% |
| - ມູນຄ່າການຊື້-ຂາຍ | **79,66** | **1.119,53** | **63,57** | **1.339,08** | **-20,20%** | **19,61%** |
| 3. ການຊື້ຂາຍລະຫວ່າງ ທຫລ ກັບ ທທກ | **-12,35** | **-32,50** | **-8,90** | **-65,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 20,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 12,35 | 52,50 | 8,90 | 65,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **0,34** | **32,53** | **2,59** | **54,00** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **80,13** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 150,03 | 0,04 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 10/2016 ຄາດວ່າຈະຢູ່ໃນລະດັບ 1,90% ເພີ່ມຂຶ້ນຈາກ 1,84% ໃນເດືອນ 09/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 176,78 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 407,4% ເມື່ອທຽບໃສ່ອາທິດຜ່ານມາ.

## III. ວຽກງານວິຊາສະເພາະ

### 1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 705 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 72 ສະບັບ ເທົ່າກັບ 11,00% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 412,03 ຕື້ກີບ ເພີ່ມຂຶ້ນ 29% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (21-27/10/2016) ມີ ຈຳນວນ 2.160 ຄັ້ງ ໂດຍມີມູນຄ່າ 353,30 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳ ຫຼາຍກວ່າໝູ່ ຈຳນວນ 591 ຄັ້ງ;

**ກະຊວງການເງິນ:** ມີການບໍລິການ 11 ຄັ້ງ ມູນຄ່າ 198 ຕື້ກີບ.

2. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ (ຂໍ້ມູນດ້ານລຸ່ມນີ້ແມ່ນຂໍ້ມູນຂອງອາທິດທີ່ຜ່ານມາ).

ດັດຊະນີຕະຫຼາດຫຼັກຊັບລາວ ປິດຢູ່ທີ່ 998,73ຈຸດ ເພີ່ມຂຶ້ນ 0,82% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 137.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 670,14 ລ້ານກີບ ເພີ່ມຂຶ້ນ 269,19% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 54,84% ຂອງມູນຄ່າການຊື້-ຂາຍທັງໝົດ;

| ຊື່ | ດັດຊະນີອາທິດທີ (10-14/10/2016 | ດັດຊະນີອາທິດທີ (17-21/10/2016 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 990,56 | 998,73 | 0,82 | |

– ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍ: ຮຸ້ນ, ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 4.100 | 20.190.000 | 4.924 | 13.600 | 67.865.000 | 4.990 | 231,71 | 236,13 | 66 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 32.700 | 159.965.000 | 4.892 | 123.900 | 602.025.000 | 4.859 | 278,90 | 276,35 | -33 |
| ບໍລິສັດລາວເວີນ ມະຫາຊົນ | 100 | 610.000 | 6.100 | 0 | 0 | 6.100 | -100 | -100 | - |
| ບໍລິສັດປີໂຕລ້ຽມເທລດດິ້ງ ລາວ ມະຫາຊົນ | 300 | 750.000 | 2.500 | 100 | 250.000 | 2.500 | -66,67 | -66,67 | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 0 | 0 | 3.100 | 0 | 0 | 3.100 | - | - | - |
| ທັງໝົດ | 37.200 | 181.515.000 | 0 | 137.600 | 670.140.000 | | 269,89 | 269,19 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດການເປັນປະທານໂອ້ລົມໃນພິທີມອບບັດໃຫ້ສະມາຊິກພັກສົມບູນຊຸດທີ V;

- ສຳເລັດການເຂົ້າຮ່ວມ: ❶ ເປັນປະທານປຶກສາຫາລືກ່ຽວກັບການລົງຕິດຕາມກວດກາການກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮັ້ນໍາພາຮອບດ້ານ ປະຈຳປີ 2016, ❷ ເປັນປະທານກ່າວເປີດພິທີຈັດສຳມະນາຫົວຂໍ້ "Dealing weak Bank", ❸ ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ເພື່ອຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ ❹ ຈັດກອງປະຊຸມເຜີຍແຜ່ ແລະ ຜັນຂະຫຍາຍເນື້ອໃນວຽກງານກວດກາທົ່ວປະເທດຄັ້ງທີ III, ❺ ກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດໂຄງການຜະລິດເຂົ້າ ແລະ ສົ່ງເສີມການປູກເຂົ້າເປັນສິນຄ້າຂອງ ບໍລິສັດປາວີນາພັດທະນາກະສິກຳ ຢູ່ແຂວງຈຳປາສັກ;

- ສຳເລັດການຈັດກອງປະຊຸມເຜີຍແຜ່ວຽກງານ AML/CFT ໃຫ້ແກ່ບໍລິສັດໂອນເງິນດ່ວນ ບໍລິສັດເຊົ່າສິນເຊື່ອ;

- ສຳເລັດການເຂົ້າຮ່ວມການຝຶກອົບຮົມໃນຫົວຂໍ້ "ວຽກງານຊຳລະ" ທີ່ປະເທດ ສສ.ຫວຽດນາມ;

- ສຳເລັດການເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການເຄື່ອນໄຫວທຸລະກິດຂອງບໍລິສັດ PS ສົ່ງເສີມກະສິກຳ ແລະ ອຸດສາຫະກຳຄົບວົງຈອນ

- ສຳເລັດການການວິເຄາະ STR ຈຳນວນ 13 ສະບັບ ແລະ ໄດ້ຮັບລາຍງານທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດ 01 ສະບັບ, ຮອດປະຈຸບັນ STR ລົມທັງໝົດມີ 445 ສະບັບ.

4. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ກະກຽມ: ❶ ເປັນປະທານພິທີຮັບມະຫາຊົນກ້າວໜ້າເປັນສະມາຊິກພັກສຳຮອງຂອງໜ່ວຍພັກຮາກຖານ ທະນາຄານສົ່ງເສີມກະສິກຳ, ທະນາຄານການຄ້າຕ່າງປະເທດລາວ, ❷ ເປັນປະທານເຂົ້າຮ່ວມສຳມະນາກ່ຽວກັບວຽກງານຊຳລະສະສາງ, ❸ ເປັນປະທານຮ່ວມ ກັບ ທ່ານ ເອກອັກຄະລັດຖະທູດ ອິດສະຕາລີ ປະຈຳລາວ ກອງປະຊຸມກ່ຽວກັບການຜ່ານຮ່າງແຜນຍຸດທະສານການເຂົ້າເຖິງແຫຼ່ງການບໍລິການດ້ານການເງິນສຳລັບ ສປປ ລາວ ຮ່ວມກັບຜູ້ໃຫ້ທຶນ MAFIPP, ❹ ກອງປະຊຸມຄະນະຊີ້ນຳລະດັບຊາດ ເພື່ອຄະບອນການໂຄມິນ, ❺ ກອງປະຊຸມທາບທາມຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ❻ ເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການ ທີ່ແຂວງ ອຸດົມໄຊ;

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ;

- ສືບຕໍ່ກະກຽມຄວາມພ້ອມກ່ຽວກັບການຈັດກອງປະຊຸມສອງຝ່າຍລະຫວ່າງ ທຫລ ແລະ ທະນາຄານກາງມຽນມ້າ;

- ກະກຽມສະເໜີຂັ້ນເທິງພິຈາລະນາ ເພື່ອສະເໜີເປີດກອງປະຊຸມສະພາບໍລິຫານ ພາຍຫຼັງທີ່ໄດ້ຮັບດຳລັດຂອງທ່ານ ນາຍົກລັດຖະມົນຕີ ກ່ຽວກັບການແຕ່ງຕັ້ງ ສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ;

- ກະກຽມຄວາມພ້ອມໃນການເປັນເຈົ້າພາບຈັດກອງປະຊຸມທະວິພາຄີລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງລັດຫວຽດນາມ;

- ສືບຕໍ່ກະກຽມການເປັນປະທານຮ່ວມກອງປະຊຸມລະດັບໜ່ວຍງານອາຊຽນ+3 ທີ່ ປະເທດຍີ່ປຸ່ນ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ບໍລິຫານ

ເພັດສະຖາພອນ ແກ້ວວົງວິຈິດ